大学本科教材

# 老挝语教程

第　册

黄国忠　编

中国人民解放军外国语学院

一九九　年　月

ໂດຍຕອບສະໜອງຄຳເຊື້ອເຊີນຂອງທ່ານຈຳໄດ ສີພັນດອນ ນາຍົກລັດຖະມົນຕີແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ທ່ານຫລີເພິງ ນາຍົກລັດຖະມົນຕີແຫ່ງສາທາລະນະລັດປະຊາຊົນຈີນຈະມາຢ້ຽມຢາມສົມທະວະໄມຕີສາທາລະນະລັດປະຊາທິປະໄຕປະຊາຊົນລາວຢ່າງເປັນທາງການໃນມໍ່ ໆ ນີ້ .

ວຽງຈັນ ວັນທີ ໓ ພຶດສາພາ/໑໙໙໔

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

# 公　　　告

应老挝人民民主共和国总理坎代西潘敦的邀请，中华人民共和国总理李鹏将于最近对老挝人民民主共和国进行正式友好访问。

总理府办公室

万象·1994·5·3

## ແຈ້ງການ

ເຖິງ ບັນດາພໍ່ - ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ຕຳຫລວດ ນັກທຸລະກິດພາຍໃນແລະຕ່າງປະເທດທຸກທົ່ວໜ້າຊາບວ່າ:

ທາງບໍລິສັດຂົນສົ່ງທາງນ້ຳຈະໄດ້ເປີດບໍລິການຮັບໃຊ້ການໂດຍສານທາງນ້ຳ ແຕ່ວຽງຈັນ ຜ່ານປາກຊັນ - ທ່າແຂກ ຫາ ສະຫວັນນະເຂດແລ້ວ ຈຶ່ງຈະໄດ້ ເລີ່ມແຕ່ວັນທີ ໑໖ / ໗ / ໑໙໙໔ ເປັນຕົ້ນໄປ. ຊຶ່ງພາຍໃນເຮືອກໍມີທັງອາຫານການກິນ, ພ້ອມທັງສາຍວີດີໂອໄວ້ຄອຍບໍລິການທຸກທ່ານໄປຕະຫລອດທາງ.

ນອກນີ້ ທາງບໍລິສັດຂົນສົ່ງທາງນ້ຳຍັງເປີດຮັບບໍລິການຂົນສົ່ງສິນຄ້າທາງນ້ຳ ທຸກປະເພດ ແຕ່ລະພາດ ໑ ໂຕນ ຫາ ໑໔໐ ໂຕນ ຕາມທິດຂົນສົ່ງດັ່ງນີ້:

- ສາຍເໜືອ ແຕ່ວຽງຈັນ ເຖິງປາກແບ່ງ ຫລື ຮອດແຂວງບໍ່ແກ້ວ.
- ສາຍໃຕ້ ແຕ່ວຽງຈັນ ເຖິງແກ້ງກະເບົາ ຫລືຮອດແຂວງສະຫວັນນະເຂດ

ສ່ວນລາຄານັ້ນ ຍ່ອມເຍົາ ເປັນກັນເອງ. ທ່ານຈະໄດ້ຮັບສິນຄ້າຂອງທ່ານ ຢ່າງໝັ້ນໃຈ ປອດໄພ ຫາກທ່ານມາໃຊ້ບໍລິການຈາກບໍລິສັດຂົນສົ່ງທາງນ້ຳ.

ຢ່າລືມ ! ຢ່າພາດ ! ຫາໂອກາດເດີນທາງແລະຂົນສົ່ງສິນຄ້າຂອງທ່ານດ້ວຍທາງນ້ຳ ທ່ານຈະບໍ່ຜິດຫວັງ.

ໂທລະສັບ : ໒໑ ໒໘໕໒

## ແຈ້ງການຂອງບໍລິສັດໄຟຟ້າລາວ

ເຖິງ : ພໍ່ແມ່ພີ່ນ້ອງປະຊາຊົນຊາວນະຄອນຫລວງວຽງຈັນຜູ້ຊົມໃຊ້ກະແສໄຟຟ້າທັງຫລາຍຊາບວ່າ:

ໃນຊ່ວງໄລຍະນີ້ ອາກາດຮ້ອນ - ອົບເອົ້າ ເຊິ່ງເປັນເຫດໃຫ້ຜູ້ຊົມໃຊ້ກະແສໄຟຟ້າມີຄວາມຈຳເປັນທີ່ຕ້ອງບັນເທົາຄວາມຮ້ອນດ້ວຍເຄື່ອງປັບອາກາດແອເຢັນ, ພັດລົມ ແລະອື່ນ ໆ ທີ່ມີຢູ່ ແລະຕິດຕັ້ງເພີ່ມຈາກເດີມຢ່າງຫລວງຫລາຍ.

ເຊິ່ງເຫັນວ່າການຊົມໃຊ້ໄຟຟ້າໃນຕົ້ນເດືອນ ໕ ປີ ໑໙໙໔ ນີ້ທຽບໃສ່ປີ ໑໙໙໓ ໄດ້ເພີ່ມຂຶ້ນ ໑໓% ຂອງກຳລັງໝໍ້ແປງໄຟ ເຊິ່ງຕິດຕັ້ງຮັບໃຊ້ຢູ່ຄຸ້ມຕ່າງ ໆ ລວມມີ ໔໘ ຄຸ້ມ ສູງເກີນການຄາດຄະເນນຳໃຊ້ຂອງບໍລິສັດໄຟຟ້າລາວປັບຕັ້ງໄວ້.

ຕໍ່ເຫດການດັ່ງກ່າວ ບໍລິສັດໄຟຟ້າລາວກໍ່ໄດ້ຊຸ້ມລົງສ້ອມແປງປ່ຽນຖ່າຍເຮັດໃຫ້ເປັນປົກກະຕິພາຍໃນເວລາອັນບໍ່ຊ້ານີ້.

ດັ່ງນັ້ນ, ເພື່ອບັນເທົາບັນຫາດັ່ງກ່າວ ບໍລິສັດຂໍຄວາມຮ່ວມມື ມາຍັງພໍ່-ແມ່ປະຊາຊົນຜູ້ຊົມໃຊ້ໄຟຟ້າທຸກຖ້ວນໜ້າ ຈົ່ງພ້ອມກັນຫລຸດຜ່ອນການນຳໃຊ້ໄຟຟ້າໃນ

ສ່ວນທີ່ເຫັນວ່າບໍ່ຈຳເປັນເທົ່າທີ່ຄວນ. ພ້ອມນີ້ບໍລິສັດໄຟຟ້າລາວຂໍອະໄພມາ ຍັງຜູ້ຊົມໃຊ້ໄຟຟ້າທັງຫລາຍທີ່ສະໜອງກະແສໄຟຟ້າບໍ່ສະດວກໃນໄລຍະນີ້ດ້ວຍ.

ບໍລິສັດໄຟຟ້າລາວ

---

ແຈ້ງຂ່າວມໍລະນະກຳ

ພວກຂ້າພະເຈົ້າ ຄອບຄົວອິນທະວົງ,ຄອບຄົວທ່ານຄຳຕັນ ຈັນທະລາ ຄອບຄົວທ່ານວັນນາ ເພັງສະຫວັດດີ,ຄອບຄົວທ່ານສຸຂັນທອນ ສຸດທິວົງມໍລາດ ຄອບຄົວທ່ານເຕັມພິນ ພິມແສນເມືອງ.

ຂໍແຈ້ງຄວາມເສົ້າສະຫລົດໃຈມາຍັງພີ່ນ້ອງເພື່ອນມິດສະຫາຍທັງຢູ່ໃກ້ ແລະໄກຊາບທົ່ວເຖິງກັນວ່າ:

ພໍ່ຕູ້ ລ້ອນ ອິນທະວົງ ຜູ້ເປັນພໍ່ ເປັນພໍ່ເຖົ້າ ຂອງພວກຂ້າພະເຈົ້າໄດ້ ເຖິງແກ່ກຳໄປແລ້ວດ້ວຍໂລກຊະລາ ໃນວັນທີ ໑໗/ ກ / ໑໙໙໔ ກົງກັບ ວັນອາທິດ ເວລາ ໗:໐໐ ໂມງເຊົ້າ,ລວມອາຍຸໄດ້ ໗໗ ປີ.ປະຈຸບັນ ສົບ ໄດ້ບຳເພັນກຸສົນຢູ່ບ້ານພັກ ບ້ານຂຸມຕາທ່າ ໜ່ວຍ ໄ ນ .ສຳຫລັບວັນຊາປະ–ນະກິດສົບແມ່ນຈະໄດ້ຈັດຂຶ້ນໃນຕອນບ່າຍວັນເສົາ; ວັນທີ ໑໖ / ກ /໑໙໙໔ ຂຶ້ນ ໗ ຄ່ຳ ເດືອນ ໘, ເວລາ ໑໔:໐໐ ໂມງ ຢູ່ເຕົາຫລໍ່ວັດບ້ານອຸບມຸງ.



试读结束，需要全本PDF请购买 www.ertongbook.com

## ບັດເຊີນຕ່າງ ໆ

ຕາມທຳມະດາ ຄົນເຮົາຍ່ອມມີການຕິດຕໍ່ ຄົບຄ້າສະມາຄົມກັນແດ່ບໍ່ຫລາຍກໍ່ນ້ອຍ ແລະມັກໄດ້ຮັບຄວາມເຊື້ອເຊີນ ຫລື ໄດ້ຮັບຄວາມຮ່ວມມືແດ່, ເຊັ່ນ: ເຊີນໄປໃນງານລ້ຽງ, ເຊີນໄປໃນພິທີມຸງຄຸນຕ່າງ ໆ, ເຊີນໄປໃນງານສົບເປັນຕົ້ນ, ສະນັ້ນຈຶ່ງຕ້ອງໄດ້ມີການສົ່ງແລະຮັບບັດເຊີນຕ່າງ ໆ ຢູ່ເລື້ອຍ ໆ.

### ບັດເຊີນໄປໃນງານລ້ຽງ

ເຊີນໄປໃນງານລ້ຽງແມ່ນເຊື້ອເຊີນໃຫ້ໄປຮ່ວມການຮັບປະທານອາຫານ ເພື່ອຄວາມສາມັກຄີ ລື້ນເລີງ ຫລື ອວຍພອນ ຫລື ເນື່ອງໃນພິທີສິລິມຸງຄຸນ

ແບບຢ່າງ ໑

ບັດເຊີນ

ເນື່ອງໃນໂອກາດປີໃໝ່ ກຸດຈີນ ປີ ໑໙ນີ້

ຂ້າພະເຈົ້າ ນາຍປະເສີດພອນ ມີຂຸນລັດ ພ້ອມດ້ວຍຄອບຄົວຂໍຖືເປັນກຽດ ເຊີນທ່ານ ____________ ຮ່ວມຮັບປະທານອາຫານຄ່ຳ ໃນວັນທີ ໑໑ / ໔ ປີ ໑໙໙໔ ເວລາ ໑໙:໐໐ ໂມງ ທີ່ບ້ານພັກທົ່ງຂັນຄຳ.

ຫວັງວ່າ ທ່ານຄົງສະຫລະເວລາອັນມີຄ່າ ມາຮ່ວມຮັບປະທານອາຫານກັບພວກຂ້າພະເຈົ້າດ້ວຍ.

ແບບຢ່າງ ໒

### ບັດເຊີນ

ເນື່ອງໃນໂອກາດວັນເກີດຂອງພໍ່ຄົບຮອບອາຍຸ ໗໐ ປີ.

ພວກຂ້າພະເຈົ້າ ທ້າວສົມຈິດ,ທ້າວປັນຍາ ແລະນາງຈັນທອນ ມີຄວາມຍິນດີ ຂໍຖືເປັນກຽດເຊີນທ່ານ________ໄປຮ່ວມຮັບປະທານອາຫານທ່ຽງເພື່ອເປັນສິລິມຸງຄຸນແດ່ພໍ່ ເຊິ່ງຈັດຂຶ້ນທີ່ຮ້ານອາຫານດາວວຽງ ໃນວັນອາທິດ ທີ ໑໔/ຕຸລາ / ໑໙໙໓ ເວລາ ໑໘:໐໐ ໂມງ.

## ບັດເຊີນໄປຮ່ວມພິທີສິລິມຸງຄຸນ ຫລື ງານສະເຫລີມສະຫລອງຕ່າງ ໆ

ແບບຢ່າງ ໓

### ບັດເຊີນ

ເນື່ອງໃນໂອກາດສະເຫລີມສະຫລອງວັນສ້າງຕັ້ງພັກ ປ.ປ.ລາວຄົບຮອບ ໓໙ ປີ.

ກະຊວງຖະແຫລງຂ່າວແລະວັດທະນະທຳຂໍຖືເປັນກຽດເຊີນທ່ານ________ ໄປຊົມການສະແດງຂອງຄະນະສິນລະປະກອນສູນກາງ ໃນວັນທີ ໒໒/໓/໑໙໙໔ ເວລາ ໒໐:໐໐ ໂມງ ທີ່ໂຮງມະໂຫລະສົບ ວຽງຈັນ.

ແຕ່ງການສຸພາບ. ບັດນີ້ໃຊ້ໄດ້ສອງບ່ອນນັ່ງ. ຕິດຂັດເຊີນຕອບ ໂທ ໒໗໑໓

ບັດ ເຊີນ

ຍ. ທ

ທ່ານ ບຸນເພັງ ທອງມະນີວົງ ພ້ອມດ້ວຍຄອບຄົວ

ທ່ານ ວັນທອງ ຍອຍສາຍຄຳ ພ້ອມດ້ວຍຄອບຄົວ

ທ່ານ ສົມພັນ ຈິດຕະລາດ ພ້ອມດ້ວຍຄອບຄົວ

ທ່ານ ມ.ວັນທອງ ສີສົມບຸນ ພ້ອມດ້ວຍຄອບຄົວ

ຈ. ຕ

ທ່ານ ມະຫາໂສມພາ ຫລັກໄມຕີ ພ້ອມດ້ວຍຄອບຄົວ

ທ່ານ ກຸມພັນ ສຸລີວົງ ພ້ອມດ້ວຍຄອບຄົວ

ທ່ານ ດຣ.ຂຽມ ໄຊຍະວົງ ພ້ອມດ້ວຍຄອບຄົວ

ທ່ານ ສີລິ ສຸວັນນະສີ ພ້ອມດ້ວຍຄອບຄົວ

ມີຄວາມຍິນດີຂໍເຊີນທ່ານໄປຮ່ວມເປັນກຽດໃນງານສ້າງຄອບຄົວໃໝ່

ລະຫວ່າງ

ທ້າວ ບົວວັນ ທອງມະນີວົງ ແລະ ນາງ ຈັນມາ ຕຽມອະລີຍະ

( ຜູ້ເປັນລູກ ແລະ ຫລານຊາຍ ) ( ຜູ້ເປັນລູກ ແລະ ຫລາຍສາວ)

ພິທີສູ່ຂວັນຈະໄດ້ຈັດຂຶ້ນທີ່ບ້ານເຈົ້າສາວ ຍ.ດົງໂດກ ຕ.ພະຂາວ ມ.ໄຊທານີ ກ.ພ.ວຽງຈັນ

ໃນມື້ສິ້ນ ໑໐ ຄ່ຳ ເດືອນ ໔ ພ.ສ.໒໕໑໔ ກົງກັບວັນເສົາ ທີ ໒໗ / ໒ / ໑໙໗໑ ເວລາ ໑໔ ໂມງ

ຫລັງຈາກເສັດພິທີສູ່ຂວັນແລ້ວ ເຈົ້າພາບທັງສອງຝ່າຍ ຂໍຖືເປັນກຽດເຊີນທ່ານຮ່ວມຮັບປະທານອາຫານຄ່ຳ-

- ເພື່ອເປັນສີລິມຸງຄຸນໃຫ້ແກ່ຄູ່ສ້າງຄອບຄົວໃໝ່ດ້ວຍ

## ແຈ້ງ ການ

-ເຖິງ: ບັນດາກະຊວງ,ອົງການທຽບເທົ່າກະຊວງ,ບັນດາແຂວງ ກຳແພງນະຄອນ,ບັນດາໂຄງການແລະນັກທຸລະກິດທີ່ມາລົງທຶນໃນ ສ.ປ.ປ. ລາວ.

ເລື່ອງ: ການນຳເອົາພາຫະນະກົນຈັກເຂົ້າມາຮັບໃຊ້ໃນ ສ.ປ.ປ.ລາວ

-ອີງໃສ່ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ ໐໗/ນ.ຍ. ລົງວັນທີ ໔໐/໐໑/ຜລ.

-ອີງໃສ່ໃບແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີສະບັບເລກທີ ໗໕໕ ແລະ ໐໒/ຫສນຍ.ລົງວັນທີ ໕/໐໑/ຜລ "ຫ້າມນຳເຂົ້າປະເພດລົດມືສອງ ແລະ ລົດພວງມະໄລຂວາ".

ໄລຍະຜ່ານມາ ມີຫລາຍແຂວງ ຫລາຍໂຄງການໄດ້ຂໍອະນຸຍາດນຳພາຫະນະກົນຈັກເຂົ້າມາຮັບໃຊ້ຊົ່ວຄາວໃນ ສ.ປ.ປ.ລາວ: ໃນນັ້ນ ມີທັງລົດມືສອງ ແລະລົດພວງມະໄລຂວາ ຊຶ່ງເປັນພາຫະນະທີ່ລັດຖະບານໄດ້ມີຄຳສັ່ງເກືອດຫ້າມ [illegible] ໃຊ້ [illegible] ສ.ປ.ປ.ລາວ [illegible] ແຕ່ໃນພາກປະຕິບັດຕົວຈິງ ເມື່ອສຳເລັດໂຄງການແລ້ວ ແທນທີ່ຈະນຳເອົາລົດນັ້ນກັບຄືນອອກປະເທດ

ຕາມລະບຽບຫລັກການ, ມີບາງໂຄງການພັດຂາຍລົດມົນຢູ່ພາຍໃນປະເທດ ອັນເຮັດໃຫ້ເກີດບັນຫາຫຍຸ້ງຍາກສັບສົນໃນການຄຸ້ມຄອງ.

ດັ່ງນັ້ນ, ເພື່ອປະຕິບັດໃຫ້ຖືກຕ້ອງຕາມໃບແຈ້ງການຂອງຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີທີ່ລະບຸໄວ້ເທິງນີ້.

ກະຊວງຄົມມະນາຄົມຂົນສົ່ງໄປສະນີແລະກໍ່ສ້າງຈຶ່ງຂໍແຈ້ງການມາຍັງບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ກຳແພງນະຄອນ, ບັນດາໂຄງການ ແລະນັກທຸລະກິດທີ່ມາລົງທຶນໃນ ສ.ປ.ປ.ລາວຊາບທົ່ວເຖິງກັນວ່າ :

໑)-ພາຫະນະກົນຈັກທີ່ໄດ້ຮັບອະນຸຍາດນຳເຂົ້າມາ ສ.ປ.ປ.ລາວ ເປັນການຊົ່ວຄາວນັ້ນ ເມື່ອໝົດກຳໜົດເວລາແລ້ວ ຕ້ອງໄດ້ເອົາກັບຄືນອອກຈາກປະເທດລາວຢ່າງເດັດຂາດ.

໒)-ຖ້າໂຄງການໃດບໍ່ທັນສຳເລັດ ກໍ່ຕ້ອງຂໍອະນຸຍາດຕໍ່ອາຍຸການນຳໃຊ້ພາຫະນະກົນຈັກດັ່ງກ່າວນຳກະຊວງ ຄ.ຂ.ປ.ກ. ບໍ່ດັ່ງນັ້ນ ຈະຖືວ່າເປັນລົດຜິດກົດໝາຍ.

໓)-ຫ້າມເດັດຂາດບໍ່ໃຫ້ມີການຂາຍລົດທີ່ນຳເຂົ້າມາຮັບໃຊ້ຊົ່ວຄາວໃນ ສ.ປ.ປ.ລາວ ຈະແມ່ນໃນກໍລະນີໃດກໍ່ຕາມ.

໔)-ໃຫ້ກອງຄຸ້ມຄອງພາຫະນະພະແນກ ຄ.ຂ.ປ.ກ. ກຳແພງນະຄອນແລະແຂວງຢຸດຕິການປ່ຽນປ້າຍລົດຊົ່ວຄາວມາເປັນປ້າຍລົດຮັບໃຊ້ຢູ່ ສ.ປ.ປ.ລາວຢ່າງຖາວອນ, ເວັ້ນເສຍແຕ່ລົດຊ່ວຍເຫລືອພາຍຫລັງສຳເລັດພາລະກິດຂອງໂຄງການແລ້ວ ມອບໃຫ້ລັດຖະບານລາວນຳໃຊ້ຕໍ່ໄປເທົ່ານັ້ນ ກະຊວງ ຄ.ຂ.ປ.ກ.ຈະມີຄຳແນະນະສະເພາະໃນການປ່ຽນປ້າຍລົດດັ່ງກ່າວ.

໕)-ມອບໃຫ້ກົມຂົນສົ່ງສົມທົບກັບພາກສ່ວນກ່ຽວຂ້ອງ ພ້ອມດ້ວຍເຈົ້າໜ້າທີ່ຕຳຫລວດ ລົງຕິດຕາມກວດກາລົດທີ່ຜິດກຳໜົດໃຊ້ ສ.ປ.ປ.ລາວເພື່ອສົ່ງກັບຄືນອອກປະເທດຕາມລະບຽບການ.

ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ , ວັນທີ ໐໑ ມິຖຸນາ ໑໙໙໔

ຕາງໜ້າລັດຖະມົນຕີ ກະຊວງຄົມມະນາຄົມຂົນສົ່ງໄປສະນີແລະກໍ່ສ້າງ

ທິມມະກອນ ມະໂນທຳ



试读结束，需要全本PDF请购买 www.ertongbook.com

ແຈ້ງການຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີແລະກໍ່ສ້າງ

ເຖິງ : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ ກໍາແພງນະຄອນ, ສະຖານທູດ, ອົງການຈັດຕັ້ງສາກົນ, ໂຄງການ, ນັກທຸລະກິດ ບັນດາວິສາຫະກິດຕ່າງ ໆ ຕະຫລອດເຖິງບຸກຄົນລາວ, ຊາວຕ່າງດ້າວແລະ ຕ່າງປະເທດ.

ເລື່ອງ : ຫ້າມນໍາເຂົ້າລົດຈັກສອງລໍ້ເກີນ ໒໕໐ ຊີຊີ.

- ອີງຕາມດໍາລັດຂອງສະພາລັດຖະມົນຕີ ໑໐໗/ປສລ ລົງວັນທີ ໒໖/໑໐/໘໗ ກ່ຽວກັບການຮັບຮອງແລະປະກາດໃຊ້ກົດລະບຽບວ່າດ້ວຍການ ສັນຈອນຕາມເສັ້ນທາງຫລວງ.

ປະຈຸບັນການສັນຈອນຕາມຖະໜົນຫົນທາງຢູ່ພາຍໃນກໍາແພງນະຄອນແລະ ຕົວເມືອງໃຫຍ່ບັນດາແຂວງຕ່າງ ໆ ເຫັນວ່າຍັງອໍພົ້ສົມຄວນ ໂດຍສະເພາະ ເວລາເຂົ້າການ-ເລີກການ ຜ່ານເຂດທີ່ມີຊຸມຊົນໜາແໜ້ນເຊັ່ນ: ຕະຫລາດ ໂຮງຮຽນ, ໂຮງໝໍ ຫລື ໔ ແຍກຕ່າງ ໆ.

ເຖິງຈະມີເຈົ້າໜ້າທີ່ຕໍາຫລວດຄວບຄຸມ ດູແລການສັນຈອນໃນເວລາແລະ

.../

ສະຖານທີ່ຫຍຸ້ງຍາກດັ່ງກ່າວກໍ່ຕາມ, ແຕ່ຄວາມປອດໄພຍັງບໍ່ທັນຮັບປະກັນເທົ່າທີ່ຄວນ ຍ້ອນມີຜູ້ຂັບຂີ່ຈຳນວນໜຶ່ງບໍ່ເອົາໃຈໃສ່ຕໍ່ກົດລະບຽບຈະລາຈອນຫລືສັນຍານຂອງເຈົ້າໜ້າທີ່ຕຳຫລວດ ໂດຍສະເພາະຜູ້ຂັບຂີ່ລົດຈັກ ຂາດສະຕິໝິ່ນປະໝາດ, ໃຊ້ຄວາມໄວສູງເກີນຄວາມຈຳເປັນ ກໍ່ໃຫ້ເກີດອຸບປະຕິເຫດຕາມທ້ອງຖະໜົນຢ່າງຕໍ່ເນື່ອງລຽນຕິດ. ເດືອນໜຶ່ງປະມານຮ້ອຍກວ່າລາຍ, ເຮັດໃຫ້ມີຜູ້ບາດເຈັບສາຫັດ ແລະລົ້ມຕາຍເດືອນໜຶ່ງເກືອບ ໑໐ ຄົນ, ຖືວ່າເປັນສະຖິຕິສູງທີ່ສຸດ ທຽບໃສ່ໃນໄລຍະຜ່ານມາ.

ດັ່ງນັ້ນ, ເພື່ອປະຕິບັດໃຫ້ຖືກຕ້ອງຕາມລະບຽບຫລັກການ, ເຮັດໃຫ້ສະພາບການສັນຈອນຕາມຖະໜົນຫົນທາງມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມປອດໄພໃຫ້ສູງຂຶ້ນ.

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ຈຶ່ງຂໍແຈ້ງການມາຍັງບັນດາກະຊວງ, ອົງການທຽບເທົ່າກະຊວງ, ສະຖານທູດ, ອົງການຈັດຕັ້ງສາກົນ, ໂຄງການ, ນັກທຸລະກິດ, ບັນດາວິສາຫະກິດຕ່າງ ໆ , ຕະຫລອດເຖິງບຸກຄົນລາວ, ຊາວຕ່າງດ້າວແລະຕ່າງປະເທດຢູ່ໃນ ສ.ປ.ປ.ລາວຊາບທົ່ວເຖິງກັນວ່າ:

໑)-ລົດຈັກ ສອງລໍ້ທີ່ມີຄວາມແຮງເກີນ ໒໕໐ ຊີຊີແມ່ນບໍ່ອະນຸຍາດໃຫ້ນຳເຂົ້າມາໃຊ້ທົ່ວໄປຢູ່ໃນ ສ.ປ.ປ.ລາວເດັດຂາດ.

໒)-ຫ້າມບໍ່ໃຫ້ມີການຂາຍລົດປະເພດດັ່ງກ່າວລັກສະນະທົ່ວໄປ.

໓)-ໃຫ້ກອງບັນຊາການປ້ອງກັນຄວາມສະຫງົບ ຄ.ຂ.ປ.ກ. ກຳແພງນະຄອນ ແລະແຂວງປຸດຕິການອອກທະບຽນປ້າຍໃຫ້ລົດຈັກສອງລໍ້ທີ່ມີຄວາມແຮງເກີນ ໒໕໐ ຊີຊີຢູ່ ສປປລ ຈະແມ່ນກໍລະນີໃດກໍຕາມ.ຍົກເວັ້ນແຕ່ລົດຮັບໃຊ້ປ້ອງກັນຜູ້ນຳ ແລະ ຮັກສາຄວາມສະຫງົບຂອງເຈົ້າໜ້າທີ່ຕຳຫລວດເທົ່ານັ້ນ.

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ຈະມີຄຳແນະນຳສະເພາະໃນການອະນຸຍາດໃຫ້ຂຶ້ນທະບຽນລົດດັ່ງກ່າວ.

ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

/3

参考译文

# 公　　告

致：各部、部级机关；各省、万象市；各工程项目及来老挝投资的企业家们

事由：关于引进在老挝使用的机动车辆问题

根据：九三年一月二十日发布的第七号总理令

根据：九三年一月五日颁布的国务院办公厅第九五五号和三十二号公告

前一时期，不少省不少工程投资项目申请引进了暂时在老挝使用的车辆，其中也有政府已明文规定禁止长久在老挝使用的"二道手车"和"方向盘在右侧的车"。但实际上，当工程竣工后，本应按照规定把这些车撤离老挝，但有些"工程项目"却把这些车在老挝国内出售，造成了管理上的混乱。

因此，为了切实贯彻国务院办公厅的上述公告，现交通运输、邮电、建筑部谨向各部，部级机关，各省、万象市，各工程投资项目以及来老挝投资的企业家们发出如下公告：

（1）被获准暂时引进老挝的机动车辆，一俟到规定期限，就一定要撤出老挝。

（2）如果某工程尚未竣工，则必须向交通运输、邮电建筑部申请延长车辆的使用期限，否则将被视为非法车辆。

（3）无论何种情况，绝对禁止出售暂时引进老挝的车辆

（4）指示各省、万象市交通运输、邮电、建筑厅车辆管理局，停止把临时车牌更换成长久车牌。那些工程完成之后无

保留送给老挝政府继续使用的车辆除外，对于这部分车的牌照更换问题，交通运输、邮电、建筑部将另行规定办法。

（5）授权运输厅在有关部门以及警察的配合下，对在老挝使用期限已满的车辆进行追查，以便按照规定把这些车辆遣返出国

此公告自签署之日起生效

交通运输、邮电、建筑部部长代理

西玛贡·玛诺他

一九九四年六月一日于万象。

请　　　　　柬

为了庆祝中华人民共和国成立四十五周年，中国驻老挝大使馆将于十月一日晚20.00点正在大使馆草坪上放映两部中国故事片。特恭请您及您的家属届时光临观看。

中华人民共和国驻老挝大使……

一九九四年九月二十八日·万象

请　　　　　柬

老挝国际航空公司恭请 __________ 参加我公司（将）于一九九二年六月六日七时三十分在瓦德机场举行的万象至清迈首航开通仪式。

因故不能出席请电告：2094—17

老挝国际航空公司经理



试读结束，需要全本PDF请购买 www.ertongbook.com